**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

ແຂວງບໍ່ແກ້ວ

ເລກທີ 424/ຈຂ.ບກ
ບໍ່ແກ້ວ, ວັນທີ 24 ເມສາ 2018

## ຄຳສັ່ງ
## ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ,ລົງວັນທີ 14 ທັນວາ 2015.
- ອີງຕາມ ກົດໝາຍວ່າດ້ວຍທະບຽນສານ ສະບັບເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009.
- ອີງຕາມ ຄຳສັ່ງ ຂອງນາຍົກລັດຖະມົນຕີ ສະບັບເລກທີ 10/ນຍ, ລົງວັນທີ 01 ເມສາ 2016 ວ່າດ້ວຍການເພີ່ມທະວີຄວາມເອົາໃຈໃສ່ຕໍ່ວຽກງານທະບຽນສານ.
- ອີງຕາມ ໃບສະເໜີ ຂອງພະແນກຍຸຕິທຳແຂວງບໍ່ແກ້ວ ສະບັບເລກທີ 468/ພຍ.ບກ, ລົງວັນທີ 30 ພະຈິກ 2017.

ວຽກງານທະບຽນສານ ເປັນວຽກງານໜຶ່ງ ທີ່ມີບົດບາດສຳຄັນຂອງຂະແໜງຍຸຕິທຳ ໃນການຢັ້ງຢືນຄວາມຖືກຕ້ອງຕາມຄວາມເປັນຈິງ ແລະ ຕາມກົດໝາຍ ຂອງສັນຍາ ແລະ ເອກະສານອື່ນໆ ແນ່ໃສ່ເພີ່ມທະວີນິຕິທຳ, ປົກປ້ອງສິດຜົນປະໂຫຍດອັນຊອບທຳ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ, ປະກອບສ່ວນໃນການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງແຂວງ ບໍ່ແກ້ວ ກໍ່ຄືການພັດທະນາເສດຖະກິດ - ສັງຄົມຂອງຊາດ.

ຜ່ານການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ທະບຽນສານ ທີ່ປະກາດໃຊ້ມາແລ້ວ 20 ກວ່າປີ ເຫັນວ່າຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມ ເຖິງຄວາມໝາຍ, ຄວາມສຳຄັນ, ຜົນປະໂຫຍດ ທີ່ຈະໄດ້ຮັບຈາກການຢັ້ງຢືນ ໂດຍອົງການທະບຽນສານ ຍັງບໍ່ທັນກວ້າງຂວາງ, ເລິກເຊິ່ງ ແລະ ຍັງມີຄວາມເຂົ້າໃຈບໍ່ຈະແຈ້ງ ລະຫວ່າງ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການທະບຽນສານ ແລະ ສານປະຊາຊົນ ຫຼາຍພາກສ່ວນຍັງຖືເບົາຕໍ່ກັບການຈົດທະບຽນສານ, ການຢັ້ງຢືນຄວາມຖືກຕ້ອງຂອງສັນຍາ ແລະ ເອກະສານສຳຄັນຕ່າງໆ ຈຶ່ງເປັນສາເຫດໜຶ່ງທີ່ພາໃຫ້ເກີດມີຂໍ້ຂັດແຍ່ງໃນສັງຄົມ.

ເພື່ອສ້າງຄວາມຮັບຮູ້ ແລະ ເຂົ້າໃຈຂອງສັງຄົມ ກ່ຽວກັບວຽກງານທະບຽນສານ ແລະ ເຮັດໃຫ້ກົດໝາຍວ່າດ້ວຍທະບຽນສານ ໄດ້ຮັບການຈັດຕັ້ງປະຕິບັດຢ່າງເປັນເອກະພາບ, ໃນຂອບເຂດທົ່ວແຂວງ ບໍ່ແກ້ວ, ທັງເປັນການຍົກສູງຄຸນນະພາບ ໃນການຢັ້ງຢືນສັນຍາ ຫຼື ເອກະສານອື່ນ ໃຫ້ມີຄຸນຄ່າທາງດ້ານກົດໝາຍ, ເພື່ອຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງປະກອບ ສ່ວນສຳຄັນເຂົ້າໃນການສ້າງຄວາມຍຸຕິທຳ ແລະ

ສີວິໄລ ຂອງສັງຄົມ.

**ເຈົ້າແຂວງ ແຂວງບໍ່ແກ້ວ ອອກຄຳສັ່ງ:**

1. ໃຫ້ບັນດາພະແນກການ, ອົງການອ້ອມຂ້າງແຂວງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ບັນດາເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງເພີ່ມທະວີຄວາມເອົາໃຈໃສ່ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍທະບຽນສານ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງ ກັບວຽກງານທະບຽນສານຢ່າງເຂັ້ມງວດ ໂດຍໃຫ້ຖືເອົາການເຄົາລົບ ແລະ ປະຕິບັດກົດໝາຍວ່າດ້ວຍທະບຽນສານ ເປັນຂະບວນການໜຶ່ງທີ່ສຳຄັນ ໃນການສ້າງແຂວງ ບໍ່ແກ້ວ ໃຫ້ເປັນແຂວງທີ່ມີຄວາມຍຸຕິທຳ, ສີວິໄລ ຕາມແນວທາງຂອງພັກ - ລັດ, ປະກອບສ່ວນເຂົ້າໃນການສ້າງສາ ແລະ ພັດທະນາເສດຖະກິດ - ສັງຄົມຂອງແຂວງ.

2. ໃຫ້ບັນດາພະແນກການອ້ອມຂ້າງແຂວງ, ອົງການຈັດຕັ້ງມະຫາຊົນ, ບັນດາເມືອງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ທັງພາກລັດ ແລະ ເອກະຊົນ, ພົນລະເມືອງລາວ ແລະ ຕ່າງປະເທດ ທຸກຄົນຮັບຮູ້ ແລະ ປະຕິບັດຢ່າງເປັນເອກະພາບກັນ ໃນການຈັດຕັ້ງປະຕິບັດວຽກງານທະບຽນສານ ຕາມທີ່ໄດ້ກຳນົດໄວ້ໃນມາດ ຕາທີ 09 ຂອງກົດໝາຍວ່າດ້ວຍທະບຽນສານທີ່ວ່າ:

- ວຽກງານທະບຽນສານແມ່ນການຢັ້ງຢືນຄວາມຖືກຕ້ອງຂອງສັນຍາປະເພດຕ່າງໆ ເຊັ່ນ: ສັນຍາຊື້ຂາຍ, ກູ້ຢືມ, ເຊົ່າ, ຮັບເໝົາກໍ່ສ້າງ, ແຮງງານ, ຮຸ້ນສ່ວນ ແລະ ອື່ນໆ.
- ພິໄນກຳ.
- ກຳມະສິດ ກ່ຽວກັບສິນສົມສ້າງ ຫຼື ຊັບເດີມຂອງຄູ່ຜົວເມັຍ.
- ເອກະສານສຳເນົາ.
- ລາຍເຊັນ ຫຼື ລາຍໂປ້ມື.
- ການແປພາສາ.
- ຕົວບຸກຄົນທຽບກັບຮູບຖ່າຍ.
- ວັນ, ເດືອນ, ປີ ຍື່ນເອກະສານ.
- ການຮັບເອກະສານທີ່ກ່ຽວກັບການຢັ້ງຢືນ.
- ເອກະສານອື່ນ.

ທຸກໆເອກະສານທີ່ສຳຄັນ ຫຼື ສັນຍາຕ່າງໆ ຈະມີຄຸນຄ່າທາງດ້ານກົດໝາຍ ໄດ້ກໍ່ຕໍ່ເມື່ອໄດ້ຮັບການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທະບຽນສານເທົ່ານັ້ນ. ໃນກໍລະນີສັນຍາ ຫຼື ເອກະສານທີ່ຍັງບໍ່ທັນໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານນັ້ນ, ໃຫ້ອົງການຈັດຕັ້ງລັດທີ່ກ່ຽວຂ້ອງ ແນະນຳບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນໆ ນຳໄປຢັ້ງຢືນຄວາມຖືກຕ້ອງ ນຳຫ້ອງການທະບຽນສານ ( ພະແນກຍຸຕິທຳແຂວງ ) ກ່ອນ.

3. ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທີ່ນຳເອົາສັນຍາ ຫຼື ເອກະສານຕ່າງໆ ມາຢັ້ງຢືນຄວາມຖືກຕ້ອງທາງດ້ານກົດໝາຍ ນຳຫ້ອງການທະບຽນສານ ນັ້ນ, ຕ້ອງຈ່າຍຄ່າທຳນຽມ ແລະ ຄ່າບໍລິການ

ຕາມກົດໝາຍວ່າດ້ວຍທະບຽນສານ ແລະ ລັດຖະບັນຍັດຂອງປະທານປະເທດ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

4. ໃຫ້ພະແນກຍຸຕິທຳແຂວງ ແລະ ຫ້ອງການຍຸຕິທຳ 05 ເມືອງ ຕ້ອງເພີ່ມທະວີຄວາມເອົາໃຈໃສ່ໃນການປະສານສົມທົບ ແລະ ໂຄສະນາເຜີຍແຜ່ກົດໝາຍວ່າດ້ວຍທະບຽນສານ ແລະ ບັນດານິຕິກຳຕ່າງໆ ກ່ຽວກັບວຽກງານທະບຽນສານ ໃຫ້ບັນດາພະແນກການ, ອົງການອ້ອມຂ້າງແຂວງ, ບັນດາເມືອງ, ອົງການຈັດຕັ້ງມະຫາຊົນ, ແນວລາວສ້າງຊາດ, ອຳນວຍການໂຮງຮຽນ - ໂຮງໝໍ, ບັນດາວິສາຫະກິດຂອງລັດ, ເອກະຊົນ, ບັນດາທະນາຄານທຸລະກິດ, ບໍລິສັດ, ຫ້າງຮ້ານ, ສະພາບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ, ຜູ້ປະກອບການທຸລະກິດທັງພາຍໃນ ແລະ ຕ່າງປະເທດ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ພາຍໃນແຂວງບໍ່ແກ້ວ ຮັບຮູ້ ແລະ ເຂົ້າໃຈ ເຖິງຄວາມໝາຍຄວາມສຳຄັນ ແລະ ຜົນປະໂຫຍດທີ່ຈະໄດ້ຮັບຈາກການຢັ້ງຢືນຄວາມຖືກຕ້ອງ ຂອງສັນຍາ ແລະ ເອກະສານຕ່າງໆ ໂດຍຫ້ອງການທະບຽນສານ ( ນາຍທະບຽນສານ ).

5. ໃຫ້ຄະນະພັກ, ຄະນະພະແນກຍຸຕິທຳແຂວງ, ຄະນະພັກ, ອົງການປົກຄອງເມືອງ ແລະ ບັນດາຫ້ອງການຍຸຕິທຳເມືອງ ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງ ຂອງວຽກງານທະບຽນສານໃນຂັ້ນຂອງຕົນ. ໃນນີ້, ເມືອງໃດທີ່ສ້າງ ຕັ້ງຂຶ້ນແລ້ວ, ກໍ່ໃຫ້ກວດກາ ແລະ ປັບປຸງ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງທາງດ້ານການເມືອງ, ແນວຄິດ, ການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ, ເມືອງໃດຫາກຍັງບໍ່ທັນໄດ້ສ້າງຕັ້ງໜ່ວຍງານທະບຽນສານ ກໍ່ໃຫ້ຄົ້ນຄວ້າ ແລະ ດຳເນີນການສ້າງຕັ້ງໃຫ້ເປັນລະບົບຄົບຊຸດພ້ອມ ທັງຊີ້ນຳ - ນຳພາ ໜ່ວຍງານດັ່ງກ່າວ ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍທະບຽນສານ.

6. ມອບໃຫ້ພາກສ່ວນທີ່ກ່ຽວຂ້ອງ ນັບທັງຂັ້ນແຂວງ ແລະ ຂັ້ນເມືອງ, ເພີ່ມທະວີເອົາໃຈໃສ່ໃກ້ຊິດຕິດແທດ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກດ້ານຕ່າງໆ ເປັນຕົ້ນງົບປະມານ, ສະຖານທີ່ເຮັດວຽກ, ພາຫະນະ ແລະ ອຸປະກອນຮັບໃຊ້ທີ່ຈຳເປັນ ໃຫ້ວຽກງານທະບຽນສານ ເພື່ອໃຫ້ວຽກງານດັ່ງກ່າວ ສາມາດປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງເຕັມສ່ວນ ແນ່ໃສ່ຮັບປະກັນການບໍລິການສັງຄົມ ດ້ວຍຄວາມວ່ອງໄວ, ຖືກຕ້ອງ ແລະ ມີປະສິດທິຜົນສູງ, ປະກອບສ່ວນໃນການພັດທະນາເສດຖະກິດ - ສັງຄົມຂອງແຂວງ. ພ້ອມກັນນັ້ນ ກໍ່ເອົາໃຈໃສ່ຄຸ້ມຄອງລາຍຮັບຈາກຄ່າທຳນຽມ ແລະ ຄ່າບໍລິການຕ່າງໆຂອງການຈົດທະບຽນສານ ໃຫ້ຖືກຕ້ອງ, ສອດຄ່ອງກັບກົດໝາຍ ແລະ ລະບຽບການເງິນ, ງົບປະມານ.

7. ໃຫ້ພະແນກຍຸຕິທຳແຂວງ, ຫ້ອງການຍຸຕິທຳເມືອງ ເພີ່ມທະວີຄວາມເອົາໃຈໃສ່ ໃນການກໍ່ສ້າງບຳລຸງ, ຍົກລະດັບວິຊາສະເພາະ ແລະ ທິດສະດີ ໃຫ້ພະນັກງານທະບຽນສານ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ ດ້ວຍຫຼາຍຮູບການ ເປັນຕົ້ນການເຂົ້າຮ່ວມຝຶກອົບຮົມໄລຍະສັ້ນ, ໄລຍະຍາວໃຫ້ເປັນລະບົບຕໍ່ເນື່ອງ ເພື່ອໃຫ້ໄດ້ຜູ້ຊຳນານງານ ຫຼື ຜູ້ຊ່ຽວຊານ ໃນວຽກງານດັ່ງກ່າວ ແນ່ໃສ່ຮັບປະກັນຄຸນນະພາບ ຂອງວຽກງານທະບຽນສານ, ຮັບປະກັນການສະໜອງຂໍ້ມູນທີ່ຊັດເຈນ ໃຫ້ແກ່ການດຳເນີນຄະດີ ຕາມຂະບວນການຍຸຕິທຳ ໃຫ້ມີຄວາມວ່ອງໄວ ແລະ ຖືກຕ້ອງ ທັງຮັບປະກັນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ໃຫ້ມີຄວາມເຂັ້ມງວດ ແລະ ສັກສິດ ຫຼາຍຂຶ້ນ.

8. ມອບໃຫ້ພະແນກຍຸຕິທຳແຂວງ, ຫ້ອງການຍຸຕິທຳເມືອງ ເປັນເສນາທິການ ໃຫ້ແກ່ອົງການປົກ

ຄອງແຂວງ, ອົງການປົກຄອງເມືອງ ແລະ ເປັນເຈົ້າການປະສານສົມທົບ, ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນດີ, ພ້ອມທັງສະຫຼຸບ, ສັງລວມ ແລະ ລາຍງານ ໃຫ້ຂັ້ນເທິງ ຢ່າງເປັນປົກກະຕິ ເພື່ອຊາບ ແລະ ມີທິດຊີ້ນຳ.

9. ບັນດາພະແນກການ, ອົງການອ້ອມຂ້າງແຂວງ, ສອງກອງບັນຊາການທະຫານ - ຕຳຫຼວດ, ບັນດາເມືອງ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ສະພາປະຊາຊົນແຂວງ, ໂຮງຮຽນ - ໂຮງໝໍບັນດາທະນາຄານທຸລະກິດ, ບໍລິສັດ, ຫ້າງຮ້ານ, ສະພາບໍລິຫານເຂດເສດຖະກິດພິເສດສາມຫຼ່ຽມຄຳ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຢ່າງເຂັ້ມງວດ.

10. ຄຳສັ່ງ ສະບັບນີ້ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງໄດ້ພິມລົງໃນຈົດໝາຍເຫດທາງລັດຖະການ 15 ( ສິບຫ້າ ) ວັນ.

ເຈົ້າແຂວງ ແຂວງບໍ່ແກ້ວ

ປອ ຄຳພັນ ເຜີຍຍະວົງ